# ຊາວໜຸ່ມຮາກຖານ ທຫລ ຍົກລະດັບຄວາມຮູ້ກ່ຽວກັບ ວຽກງານພັດທະນາແບບຍືນຍົງ ແລະ ການປະກອບສ່ວນຂອງ ທຫລ




ຄະນະບໍລິຫານງານຊາວໜຸ່ມຮາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສ້າງຂະບວນການເຄື່ອນໄຫວດ້ານວິຊາສະເພາະ ຄັ້ງທີ III ປະຈຳປີ 2019 ຂຶ້ນໃນວັນທີ 25 ເມສາ 2019 ໂດຍການເປັນປະທານຂອງສະຫາຍ ໝູໄຊ ພູມສຸວັນ ຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ, ມີຜູ້ບັນຍາຍທີ່ມາຈາກໜ່ວຍຊາວໜຸ່ມກົມຮ່ວມມືສາກົນ ທຫລ ແລະ ນັກສຳມະກອນທີ່ເປັນສະມາຊິກຊາວໜຸ່ມຮາກຖານ ທຫລ ເຂົ້າຮ່ວມ 40 ກວ່າສະຫາຍ.

ການຈັດສຳມະນາໃນຄັ້ງນີ້ເປັນການຍົກລະດັບຄວາມຮູ້ ຄວາມເຂົ້າໃຈໃຫ້ແກ່ສະມາຊິກຊາວໜຸ່ມຮາກຖານ ທຫລ ກ່ຽວກັບຄວາມເປັນມາ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານພັດທະນາແບບຍືນຍົງ (Sustainable Development Goal ຂຽນຫຍໍ້ວ່າ SDG) ເຊິ່ງເປັນແຜນການຍຸດທະສາດຮອດປີ 2030 ທີ່ບັນດາປະເທດສະມາຊິກສະຫະປະຊາຊາດໄດ້ມີມະຕິເຫັນດີຮັບຮອງເອົາ. ວຽກງານພັດທະນາແບບຍືນຍົງດັ່ງກ່າວນີ້ປະກອບມີ 17 ເປົ້າໝາຍ ເຊິ່ງເນັ້ນໜັກໃສ່ 3 ດ້ານຄື: ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໂດຍມີກຳນົດການຈັດຕັ້ງປະຕິບັດ 15 ປີ (ແຕ່ປີ 2015-2030). ຕໍ່ກັບວຽກງານດັ່ງກ່າວ ລັດຖະບານແຫ່ງ ສປປ ລາວ ກໍ່ໄດ້ເອົາໃຈໃສ່ ແລະ ຍົກສູງໂດຍການນຳເອົາວຽກງານດັ່ງກ່າວເຂົ້າໃນແຜນພັດທະນາວຽກງານເສດຖະກິດ-ສັງຄົມ 5 ປີ (ແຕ່ປີ 2025-2030) ຂອງ ສປປ ລາວ, ສຳລັບຂະແໜງການທະນາຄານກໍ່ຄື ທຫລ ໄດ້ປະກອບສ່ວນໂດຍມີທ່ານຮອງຜູ້ວ່າການ ທຫລ ຢູ່ໃນຄະນະຊີ້ນຳລະດັບຊາດ ແລະ ມີການແຕ່ງຕັ້ງຄະນະຮັບຜິດຊອບວຽກງານພັດທະນາແບບຍືນຍົງ ເຊິ່ງມາຈາກຫຼາຍກົມພາຍໃນ ທຫລ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຂະແໜງການທະນາຄານ.







ການປະກອບສ່ວນຂອງ ທຫລ ໃນວຽກງານພັດທະນາແບບຍືນຍົງ ໄດ້ກຳນົດຕົວຊີ້ບອກ (Target) ຂອງຂະແໜງການທະນາຄານໂດຍພື້ນຖານ ເຊິ່ງມີທັງໝົດ 9 ຕົວຊີ້ບອກຄື: 1.) ອັດຕາສ່ວນຂອງຜູ້ໃຫຍ່ (ອາຍຸ 18 ປີ ຂຶ້ນໄປ) ທີ່ມີບັນຊີເງິນຝາກຢູ່ທະນາຄານທຸລະກິດ ທຽບໃສ່ຈຳນວນປະຊາກອນທັງໝົດ, 2.) ອັດຕາສ່ວນຂອງຜູ້ໃຫຍ່ (ອາຍຸ 18 ປີ ຂຶ້ນໄປ) ທີ່ມີບັນຊີເງິນຝາກຢູ່ສະຖາບັນການເງິນ/ສະຖາບັນການເງິນຈຸລະພາກຕ່າງໆທຽບໃສ່ຈຳນວນປະຊາກອນທັງໝົດ, 3.) ອັດຕາສ່ວນຂອງຈຳນວນບ້ານທີ່ມີສາຂາທະນາຄານ/ສະຖາບັນການເງິນຈຸລະພາກ, 4.) ອັດຕາສ່ວນຂອງຈຳນວນເມືອງທີ່ມີສາຂາທະນາຄານ/ສະຖາບັນການເງິນຈຸລະພາກ, 5.) ອັດຕາສ່ວນຜູ້ໃຫຍ່ 100,000 ຄົນທີ່ມີຕູ້ ATMs/ສາຂາທະນາຄານທຸລະກິດ/ສະຖາບັນການເງິນ, 6.) ອັດຕາສ່ວນຂອງຜູ້ໃຫຍ່ (18 ປີຂຶ້ນໄປ) ທີ່ມີປື້ມບັນຊີເງິນຝາກຢູ່ທະນາຄານ ແລະ ມີການຂໍກູ້ຢືມເງິນຢູ່ທະນາຄານທຸລະກິດ/ສະຖາບັນການເງິນ, 7.) ອັດຕາສ່ວນຂອງວິສາຫະກິດຂະໜາດນ້ອຍແລະກາງ (SME) ທີ່ກູ້ຢືມເງິນນຳທະນາຄານທຸລະກິດ/ສະຖາບັນການເງິນ, 8.) ຈຳນວນນິຕິກຳທີ່ກ່ຽວຂ້ອງຂອງ ທຫລ ທີ່ໄດ້ມີການສ້າງ ແລະ ປັບປຸງ ເພື່ອໃຫ້ສອດຄ່ອງກັບມາດຕະຖານຂອງສາກົນ ແລະ 9.) ມູນຄ່າການໂອນເງິນຂ້າມປະເທດຂອງສ່ວນບຸກຄົນ ທຽບກັບ GDP (ເປັນສະກຸນເງິນໂດລາສະຫະລັດ) ເຊິ່ງທັງໝົດຂອງ 9 ຕົວຊີ້ບອກນີ້ແມ່ນນອນໃນ 5 ເປົ້າໝາຍຄື: 1.) ລົບລ້າງຄວາມທຸກຍາກ, 2.) ການມີວຽກເຮັດງານທຳ ແລະ ເສດຖະກິດຂະຫຍາຍຕົວ, 3.) ສົ່ງເສີມການຫັນເປັນອຸດສາຫະກຳ, ການປະດິດສ້າງ, ການສ້າງພື້ນຖານໂຄງລ່າງທີ່ເຂັ້ມແຂງ 4.) ຫຼຸດຜ່ອນຄວາມບໍ່ສະເໝີພາບ ແລະ 5.) ເປັນຄູ່ຮ່ວມມືເພື່ອເປົ້າໝາຍການພັດທະນາແບບຍືນຍົງ.

**#ຂ່າວ-ພາບ: ວັນປະເສີດ ສິມບຸນຂັນ.**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ